# ມິຊຊາອາທິດທີ 28 ການົດທຳມະດາປີ C
## ວັນທີ 13 ຕຸລາ 2019



**ພຣະວໍລະສານໂດຍນັກບຸນລູກາ 17, 11-19**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດໄປນະຄອນເຢລູຊາແລມ, ພຣະອົງໄດ້ເດີນທາງຜ່ານແຂວງຊາມາຣີແລະກາລີເລ. ພໍສະເດັດເຂົ້າໄປໃນບ້ານແຫ່ງໜຶ່ງກໍມີຄົນຂີ້ທູດສິບຄົນແລ່ນມາຫາພຣະອົງ. ພວກເຂົາຢຸດຢືນຢູ່ໄກໆແລ້ວຮ້ອງຂຶ້ນວ່າ: ໂອພຣະເຢຊູ, ພຣະອາຈານເຈົ້າ! ຂໍເມດຕາພວກຂ້ານ້ອຍທ້ອນ! ເມື່ອພຣະອົງທອດພຣະເນດພວກເຂົາແລ້ວ, ກໍກ່າວວ່າ: ພວກເຈົ້າຈົ່ງໄປສຳແດງຕົວຕໍ່ພຣະສົງ. ເມື່ອເວລາພວກເຂົາເດີນໄປນັ້ນ, ພວກເຂົາກໍໄດ້ຫາຍຈາກພະຍາດ.

ມີຄົນຜູ້ໜຶ່ງໃນພວກນັ້ນ, ເມື່ອເຫັນຕົວດີແລ້ວ, ກໍຫລົບຄືນມາພ້ອມທັງສັນລະເສີນພຣະເປັນເຈົ້າດ້ວຍສຽງດັງ. ແລະຂາບລົງແທບເທົ້າຂອງພຣະເຢຊູເຈົ້າເພື່ອຂອບພຣະຄຸນພຣະອົງ. ຄົນຜູ້ນີ້ແມ່ນຊາວຊາມາຣີອາ. ພຣະເຢຊູເຈົ້າຈຶ່ງກ່າວກັບເຂົາວ່າ: ບໍ່ໄດ້ຫາຍຈາກພະຍາດໝົດທັງສິບຄົນບໍ? ອີກເກົ້າຄົນນັ້ນຢູ່ໃສ? ເຫດໃດຈຶ່ງມີແຕ່ຄົນຕ່າງດ້າວຄົນນີ້ຜູ້ດຽວຫລົບມາຂອບພຣະຄຸນພຣະເປັນເຈົ້າ!

ແລ້ວພຣະອົງກ່າວກັບເຂົາວ່າ: ຈົ່ງລຸກຂຶ້ນເສຍ, ຄວາມເຊື່ອຂອງເຈົ້າໄດ້ຊ່ວຍເຈົ້າແລ້ວ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 17, 11-19**

ອາທິດທີ່ຜ່ານມາ, ພຣະເຢຊູເຈົ້າກ່າວກັບພວກສາວົກວ່າ: "ຖ້າພວກເຈົ້າມີຄວາມເຊື່ອທໍ່ເມັດງາແລ້ວ ພວກເຈົ້າກໍອາດສັ່ງກັບກົກໄມ້ໃຫຍ່ນີ້ໄດ້ວ່າ: ຈົ່ງຖອນຮາກໄປປົ່ງຢູ່ກາງທະເລພຸ້ນ ມັນກໍຈະຟັງຄວາມພວກເຈົ້າ". ໝາຍວ່າບໍ່ມີສິ່ງໃດເປັນໄປບໍ່ໄດ້ຫາກພວກເຮົາມີຄວາມເຊື່ອ.

ວັນນີ້, ພຣະເຢຊູເຈົ້າກໍກ່າວກັບຄົນຂີ້ທູດທີ່ຫາຍດີຄົນຕ່າງສາດສະໜາຊາວຊາມາຣີທີ່ກັບມາສັນລະເສີນແລະຂອບພຣະຄຸນພຣະອົງວ່າ: "ຄວາມເຊື່ອຂອງເຈົ້າໄດ້ຊ່ວຍເຈົ້າແລ້ວ".

ໃນຕອນຕົ້ນວາຈາພຣະເຈົ້າວັນນີ້, ນັກບຸນລູກາຜູ້ຂຽນພຣະວໍລະສານໄດ້ບອກໃຫ້ພວກເຮົາຮູ້ວ່າພຣະເຢຊູເຈົ້າກຳລັງເດີນທາງມຸ່ງສູ່ນະຄອນເຢລູຊາແລມ. ອັນແມ່ນເສັ້ນທາງສູ່ມະຫາທໍລະມານ, ການຕາຍແລະການກັບເປັນຄືນມາຂອງພຣະເຢຊູເຈົ້າ. ຫລືເວົ້າອີກຢ່າງແມ່ນເສັ້ນທາງແຫ່ງຄວາມຣອດ.

ບົນເສັ້ນທາງແຫ່ງຄວາມຣອດນີ້, ພຣະເຢຊູເຈົ້າໄດ້ພົບກັບຄົນຂີ້ທູດສິບຄົນ. ຄົນຂີ້ທູດໃນສະໄໝນັ້ນແມ່ນຖືກຕັດຂາດຈາກສັງຄົມແລະສາດສະໜາ. ເພາະເຂົາຖືວ່າພະຍາດຂີ້ທູດເປັນພະຍາດຕິດຕໍ່ຊຶ່ງທຳໃຫ້ຕົວເອງແລະຄົນອື່ນເປື້ອນໝອງ. ຍິ່ງໄປກວ່ານັ້ນ, ພະຍາດຂີ້ທູດຍັງຖືວ່າແມ່ນການສາບແຊ່ງຈາກພຣະເຈົ້າຍ້ອນການກະທຳບໍ່ດີຂອງເຂົາ. ຫລືເວົ້າອີກຢ່າງ, ຄົນຂີ້ທູດແມ່ນຄົນບາບ. ເພາະສະນັ້ນ, ຄົນຂີ້ທູດຈຶ່ງບໍ່ສາມາດຢູ່ຮ່ວມກັບຄົນອື່ນແລະເຂົ້າໃນວິຫານ, ໂຮງທັມເພື່ອສັນລະເສີນແລະຖະຫວາຍບູຊາຍັນໃຫ້ພຣະເຈົ້າໄດ້. ນັກບຸນລູກາຈຶ່ງບັນລະຍາຍໃຫ້ພວກເຮົາເຂົ້າໃຈວ່າ: " ຄົນຂີ້ທູດສິບຄົນນີ້ຢຸດຢືນຢູ່ແຕ່ໄກໆແລ້ວຮ້ອງຂຶ້ນວ່າ: ໂອພຣະເຢຊູ, ພຣະອາຈານເຈົ້າ! ຂໍເມດຕາພວກຂ້ານ້ອຍທ້ອນ!" ຈາກນັ້ນ, ພຣະເຢຊູເຈົ້າກໍກ່າວກັບພວກເຂົາວ່າ: " ຈົ່ງໄປສຳແດງຕົວຕໍ່ພຣະສົງ". ຄຳຖາມທີ່ຕາມມາກໍຄື: ເປັນຫຍັງພຣະເຢຊູເຈົ້າຈຶ່ງບໍ່ປິ່ນປົວພວກເຂົາໃຫ້ຫາຍດີ ແຕ່ສັ່ງພວກເຂົາໄປສຳແດງຕົວຕໍ່ພຣະສົງ? ທ້າຍສຸດແລ້ວ, ຄົນຂີ້ທູດສິບຄົນນີ້ໄດ້ຖືກປິ່ນປົວໃຫ້ຫາຍດີດ້ວຍວິທີໃດ?

ພຣະສົງໃນສະໄໝນັ້ນ, ເປັນຄົນມີບົດບາດໃນສັງຄົມແລະໃນສາດສະໜາ ເປັນຕົ້ນໃນວິຫານແລະໃນໂຮງທັມ. ຍ້ອນແມ່ນພຣະສົງເປັນຜູ້ຈຳແນກວ່າ ສິ່ງໃດບໍລິສຸດແລະສິ່ງໃດເປື້ອນໝອງ. ຄົນໃດສາມາດເຂົ້າໃນວິຫານຖະຫວາຍບູຊາຍັນໄດ້ ຍ້ອນເຂົາບໍ່ມີມົນທິນ, ແລະຄົນໃດບໍ່ສາມດເຂົ້າໃນວິຫານໄດ້ຍ້ອນເຂົາມີມົນທິນ. ດ້ວຍເຫດນີ້, ພຣະເຢຊູເຈົ້າຈຶ່ງສັ່ງຄົນຂີ້ທູດສິບຄົນນີ້ໄປຫາພວກພຣະສົງເພື່ອໃຫ້ເຂົາຢັ້ງຢືນວ່າຄົນຂີ້ທູດເຫລົ່ານີ້ໄດ້ຫາຍດີແລະບໍລິສຸດແລ້ວ. ແຕ່ນີ້ໄປ, ພວກເຂົາສາມາດກັບຄືນສູ່ສັງຄົມແລະສູ່ວິຫານຂອງພຣະເຈົ້າ.

ແຕ່ຄົນຂີ້ທູດເຫລົ່ານີ້ຫາຍດີຈາກພະຍາດດ້ວຍວິທີໃດ? ຍ້ອນພວກເຂົາໄປຫາພວກພຣະສົງບໍ? ຫລືຍ້ອນພວກເຂົາໄດ້ເຊື່ອຟັງຄຳເວົ້າຂອງພຣະເຢຊູເຈົ້າໂດຍການໄປສຳແດງຕົວຕໍ່ໜ້າພຣະສົງ? ຄຳຕອບກໍຄືຍ້ອນພວກເຂົາໄດ້ເຊື່ອຟັງຄຳເວົ້າຂອງພຣະເຢຊູເຈົ້າ ແລະອາໄສຄວາມເຊື່ອນີ້ໄດ້ທຳໃຫ້ພວກເຂົາຫາຍດີຈາກພະຍາດ. ເພາະສະນັ້ນ ,ພຣະເຢຊູເຈົ້າຈຶ່ງກ່າວກັບຄົນຂີ້ທູດຄົນຕ່າງສາດສະໜາຊາວຊາມາຣີທີ່ກັບມາຂອບພຣະຄຸນພຣະອົງວ່າ: "ຄວາມເຊື່ອຂອງເຈົ້າໄດ້ຊ່ວຍເຈົ້າແລ້ວ". ເປັນຫຍັງຜູ້ຂຽນພຣະວໍລະສານຈຶ່ງເນັ້ນເຖິງຄົນຊາມາຣີຜູ້ນີ້? ອາດຈະແມ່ນຜູ້ຂຽນພຣະວໍລະສານຢາກໃຫ້ພວກເຮົາເຂົ້າໃຈວ່າ ຄວາມຣອດທີ່ພຣະເຢຊູເຈົ້ານຳມາໃຫ້ມະນຸດນັ້ນບໍ່ໄດ້ຈຳກັດແຕ່ນຳຄົນຢິວຫລືຊົນຊາດໃດຊົນຊາດໜຶ່ງເທົ່ານັ້ນ, ແຕ່ສຳລັບໝົດທຸກຄົນ. ແລະເປັນຕົ້ນ, ຄົນທີ່ຮູ້ຈັກຫລົບຄືນມາຫາພຣະອົງເໝືອນດັ່ງຄົນຊາມາຣີຜູ້ນີ້ ເພື່ອຂອບພຣະຄຸນແລະສັນລະເສີນພຣະອົງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ